ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທະນາຄານແຫ່ງ ສປປ ລາວ ລົງຕິດຕາມກວດກາການ ດຳເນີນທຸລະກິດຂອງຮ້ານແລກປ່ຽນເງິນຕາ ປະຈຳປີ 2020

ເພື່ອເຮັດໃຫ້ການດຳເນີນທຸລະກິດແລກປ່ຽນເງິນຕາ ມີຄວາມເປັນລະບຽບຮຽບຮ້ອຍ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ໃນຕົ້ນເດືອນ ກັນຍາ ປີ 2020 ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ລົງຕິດຕາມກວດກາຮ້ານແລກປ່ຽນເງິນຕາທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ໃນຂອບເຂດນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ. ການລົງຕິດຕາມກວດກາຄັ້ງດັ່ງກ່າວ ເປັນການຈັດຕັ້ງປະຕິບັດຕາມແຜນງານວຽກງານການຄຸ້ມຄອງເງິນຕາຕ່າງປະເທດປະຈຳປີ 2020 ເວົ້າລວມ ເວົ້າສະເພາະກໍ່ຄືການຄຸ້ມຄອງທຸລະກິດແລກປ່ຽນເງິນຕາ ແນໃສ່ໃຫ້ຮ້ານແລກປ່ຽນເງິນຕາ ດຳເນີນທຸລະກິດ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຊຶ່ງໃນໄລຍະຜ່ານມາ ທຫລ ໄດ້ມີການປັບປຸງນິຕິກຳການຄຸ້ມຄອງທຸລະກິດດັ່ງກ່າວ ແລະ ໄດ້ສຳເລັດການເຜີຍແຜ່ບັນດາລະບຽບການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການດຳເນີນທຸລະກິດແລກປ່ຽນເງິນຕາ ໃຫ້ບັນດາຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ຮັບຮູ້ ແລະ ເຂົ້າໃຈ ພ້ອມທັງໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ ທຫລ ວາງອອກ ໃນແຕ່ລະໄລຍະ.





ການລົງກວດກາໃນຄັ້ງນີ້ໄດ້ສຸມໃສ່ການຕິດຕາມການເຄື່ອນໄຫວດຳເນີນທຸລະກິດແລກປ່ຽນເງິນຕາ ໂດຍສະເພາະການກຳນົດອັດຕາແລກປ່ຽນ, ການຊື້-ຂາຍເງິນຕາ ການລາຍງານຂໍ້ມູນການຊື້-ຂາຍ ແລະ ການປະຕິບັດລະບຽບການທີ່ ທຫລ ກຳນົດໄວ້.

ຜ່ານການລົງຕິດຕາມກວດກາຮ້ານແລກປ່ຽນເງິນຕາຕົວຈິງ ເຫັນວ່າ: ຮ້ານແລກປ່ຽນເງິນຕາສ່ວນໃຫຍ່ ແມ່ນສາມາດປະຕິບັດຕາມລະບຽບການທີ່ກຳນົດໄດ້ໂດຍພື້ນຖານ. ເຖິງຢ່າງໃດກໍ່ຕາມ ຍັງມີຮ້ານແລກປ່ຽນເງິນຕາຈຳນວນໜຶ່ງ ທີ່ຖືເບົາຕໍ່ການປະຕິບັດລະບຽບການ ເປັນຕົ້ນ: ກຳນົດອັດຕາແລກປ່ຽນ ແລະ ຊື້-ຂາຍເງິນຕາບໍ່ສອດຄ່ອງຕາມລະບຽບການກຳນົດ, ຂາດການລາຍງານຂໍ້ມູນການຊື້-ຂາຍເງິນຕາໃຫ້ ທຫລ, ບໍ່ມີໃບບິນຢັ້ງຢືນການແລກປ່ຽນ ແລະ ບໍ່ເກັບຂໍ້ມູນຂອງລູກຄ້າ. ຕໍ່ບັນຫາດັ່ງກ່າວ ທຫລ ກໍ່ໄດ້ມີການກ່າວເຕືອນ ພ້ອມທັງເຮັດບົດບັນທຶກການລົງກວດກາ ຢ່າງເປັນລາຍລັກອັກສອນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດມາດຕະການໃນຂັ້ນຕໍ່ໄປຢ່າງເຂັ້ມງວດ. ໃນກໍລະນີ ຮ້ານດັ່ງກ່າວຍັງສືບຕໍ່ລະເມີດລະບຽບການ ຮ້ານແລກປ່ຽນເງິນຕາດັ່ງກ່າວປະຕິບັດໃຫ້ສອດຄ່ອງກັບລະບຽບການທີ່ໄດ້ກຳນົດໃນແຕ່ລະໄລຍະ ຊຶ່ງຫາກຍັງສືບຕໍ່ລະເມີດລະບຽບການ ແມ່ນຈະຖືກປະຕິບັດມາດຕະການຕາມລະບຽບການຢ່າງເຂັ້ມງວດ.

**# ຂ່າວ-ພາບ: ພະແນກຄຸ້ມຄອງເງິນຕາຕ່າງປະເທດ,**
**ກົມນະໂຍບາຍເງິນຕາ, ທຫລ**

